Studies, Amsterdam, The Netherlands, 5-8 July 1999) ແລະທີ່ກອງປະຊຸມ **ສຶກສາປຽບທຽບລ້ານຊ້າງ-ລ້ານນາ** ທີ່ຊຽງໃຫມ່ 28-29/03/2000 ແລະ ກອງປະຊຸມສຳມະນາ**ໃບລານລາວ** ທີ່ແຂວງສະຫວັນນະເຂດ 5-7/05/2000 ແລະ ບ່ອນອື່ນໆ ເຊິ່ງຜູ້ຢາກສະແດງຄວາມຄິດເຫັນໃນເຊີງຕຳນິວິຈານຜົນງານຂອງເພິ່ນ ມັກຈະຂໍອະໄພໄວ້ລ່ວງຫນ້າສະເຫມີ ທັງນີ້ ຄົງຈະເປັນຍ້ອນຄວາມຮູ້ສຶກເຄົາຣົບຢຳເກງໃນຜົນງານ ແລະ ຊື່ສຽງຂອງເພິ່ນ ທັງໆທີ່ວ່າ ເພິ່ນເອງບໍ່ໄດ້ເກືອດຫ້າມເລື່ອງປັບປຸງດັດແປງຜົນງານການຄົ້ນຄວ້າທຸກໆອັນຂອງເພິ່ນຈັກເທື່ອ. ໂດຍມາລະຍາດ ແລະ ຄຸນສົມບັດຂອງນັກຄົ້ນຄວ້າທີ່ມີຫລັກການແລ້ວ ບໍ່ວ່າຢູ່ໃນປະເທດໃດ ນັກຄົ້ນຄວ້າຮຸ່ນໃຫມ່ ມັກໃຫ້ຄວາມຄາຣະວະນັບຖືນຳໃຊ້ຜົນງານຂອງຄົນຮຸ່ນກ່ອນໃນລະດັບໃດລະດັບນຶ່ງສະເຫມີ ຊຶ່ງນັ້ນບໍ່ຫມາຍຄວາມວ່າ ຈະບໍ່ມີການຕຳນິ ຫລືແກ້ໄຂໃນສິ່ງທີ່ມີຫລັກຖານໃຫມ່ ຄວາມຜິດພາດຍ່ອມມີໄດ້ຢ່າງແນ່ນອນ.

ໃນຈຸດນີ້ ທ່ານອາຈານ **ມະຫາສີລາ** ເອງ ກໍເວົ້າກັບພວກເຮົາເປັນທຳນອງເຕືອນຢູ່ສະເຫມີວ່າ ການຄົ້ນຄວ້າຂອງເພິ່ນໃນສະໄຫມນັ້ນ ມີຂໍ້ມູນຈຳກັດ ດັ່ງນັ້ນ ຄົງຕ້ອງມີອັນຜິດພາດຂາດຕົກບົກພ່ອງຢ່າງແນ່ນອນ ຂໍໃຫ້ລູກຫລານເປັນຜູ້ສານຕໍ່ ປັບປຸງດັດແປງໃຫ້ເຫມາະສົມ ແຕ່ໃຜໆກໍຄົງຮັບຮູ້ວ່າ ການດັດແປງແກ້ໄຂ ໂດຍນຳເອົາຂໍ້ມູນໃຫມ່ມາຕື່ມເຕີມໃສ່ເອກະສານປະຫວັດສາດ ເທົ່ານັ້ນບໍ່ພຽງພໍເທື່ອ ມັນຕ້ອງການຂໍ້ສັນນິຖານ ສະເຫນີທັດສະນະໃດນຶ່ງອອກມາ ເຊິ່ງເລື່ອງນີ້ກໍບໍ່ແມ່ນວ່າຈະເຮັດໄດ້ງ່າຍໆ ໃນມື້ນຶ່ງຍາມດຽວ ແລະ ໂດຍສະເພາະແລ້ວ ການຈະທຳການແກ້ໄຂດັດແປງຈຸດໃດຈຸດນຶ່ງແລ້ວຕື່ມເຂົ້າໄວ້ໃນຜົນງານຂອງນັກປາດອາຈານຮຸ່ນກ່ອນໆນັ້ນ ຈະຕ້ອງໄດ້ລະມັດລະວັງເປັນພິເສດ ເພາະບໍ່ດັ່ງນັ້ນ ຈະກາຍເປັນວ່າ ເຮົາລະເມີດລິຂະສິດຂອງເພິ່ນ ທັງທຳລາຍຫລັກຖານຂໍ້ມູນ ຫລັກຖານປະຫວັດສາດຂອງຊາດໄປນຳ ເພາະໄດ້ລຶບລ້າງຮ່ອງຮອຍທັດສະນະດັ້ງເດີມຂອງຍຸກສະໄຫມນຶ່ງໄປໂດຍປະລິຍາຍ ອີກຢ່າງນຶ່ງ ການຄົ້ນພົບຂໍ້ມູນໃຫມ່ ປະກອບດ້ວຍການວິໄຈອັນໃຫມ່ໆ ກໍເປັນຜົນງານສ່ວນຕົວຂອງທ່ານຜູ້ນັ້ນຢູ່ແລ້ວ ການຈະນຳເອົາຜົນງານເກົ່າ ແລະ ໃຫມ່ຂອງຜູ້ຂຽນຫລາຍຄົນມາພິມໂຮມກັນໄວ້ນັ້ນ ຈະຕ້ອງເຮັດຢ່າງມີຫລັກການນັບຖືຜົນງານຂອງກັນ ແລະ ກັນ ບໍ່ອາດບອກວ່າເປັນຜົນງານຂອງຜູ້ນຶ່ງຜູ້ດຽວໄດ້ ເພາະນັ້ນຖືວ່າຜິດຫລັກການຂອງການຄົ້ນຄວ້າຢ່າງມີວິທະຍາສາດ ດັ່ງນັ້ນ ໃນຫລາຍໆປະເທດ ຈຶ່ງມີການພິມຈຳຫນ່າຍປຶ້ມ ຫລືຜົນງານທາງປະຫວັດສາດຂອງນັກຂຽນນັກຄົ້ນຄວ້າຫລາຍຄົນ ຫລາຍລະດັບ ແລະ ໃນຫລາຍຮູບແບບ ເຊັ່ນ ເປັນປຶ້ມກາຕູນ ໃຊ້ພາສາງ່າຍໆສຳລັບເດັກນ້ອຍ ເປັນຊີດີວີດີໂອປະກອບສຽງສຳລັບຊາວຫນຸ່ມ ເປັນປຶ້ມປົກແຂງຊີງເກົ່າແກ່ ໃຊ້ພາສາບູຮານ ໃກ້ຄຽງຂອງເດີມສຳລັບນັກຄົ້ນຄວ້າລະດັບສູງ ແລະ ອື່ນໆ ທັງນີ້ກໍເພື່ອຫລີກເວັ້ນການຈຳກັດຂອບເຂດທັດສະນະຂອງຜູ້ອ່ານ ແລະ ຢັ້ງຢືນຂໍ້ມູນໃຫມ່ຈາກຫລາຍແຫລ່ງຫລາຍຄົນນັ້ນເອງ.